**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຍຸຕິທຳ

ກົມໂຄສະນາເຜີຍແຜ່ກົດໝາຍ

ເລກທີ...50.../ກຍ.ກຄຜ

ນະຄອນຫຼວງວຽງຈັນ, ວັນທີ...25 ກຸມພາ 2019...

# ບົດລາຍງານ

**ຮຽນ:** ທ່ານ ປ.ອ ເສີມສຸກ ສີມພະວົງ ຮອງລັດຖະມົນຕີກະຊວງຍຸຕິທຳ

**ເລື່ອງ:** ການລົງໂຄສະນາເຜີຍແຜ່ແອັບກົດໝາຍລາວ ເວີຊັນ 3

## I. ສະພາບລວມ

ພາຍຫຼັງແອັບກົດໝາຍລາວໄດ້ພັດທະນາມາເປັນເວີຊັນສາມ ແລະ ໄດ້ເປີດນຳໃຊ້ໃນວັນທີ 2 ພະຈິກ 2018 ເພື່ອເຮັດໃຫ້ແອັບດັ່ງກ່າວ ໄດ້ຮັບຮູ້ ແລະ ເຂົ້າໃຈ ຢ່າງກວ້າງຂວາງ ກົມໂຄສະນາເຜີຍແຜ່ກົດໝາຍໄດ້ປະສານສົມທົບກັບບັນດາສະຖາບັນການສຶກສາ ເພື່ອລົງໂຄສະນາເຜີຍແຜ່ແອັບກົດໝາຍ ໃຫ້ບັນດາອາຈານ ແລະ ນັກສຶກສາ ໂດຍແບ່ງເປັນ ສາມ ຄັ້ງ ດັ່ງນີ້:

- ວັນທີ 01 ກຸມພາ 2019 ເວລາ 9:00 ໂມງ ທີ່ ສະຖາບັນຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ ພາຍໃຕ້ການເປັນປະທານຂອງ ທ່ານ ໄກທິບພະຈັນ ພວງພະຈັນ ຮອງຫົວໜ້າສະຖາບັນຍຸຕິທຳແຫ່ງຊາດ;
- ວັນທີ 08 ກຸມພາ 2019 ເວລາ 13:30 ໂມງ ທີ່ ມະຫາວິທະຍາໄລແຫ່ງຊາດ ພາຍໃຕ້ການເປັນປະທານຂອງ ທ່ານ ປອ ພອນແກ້ວ ຈັນທະມາລີ ຜູ້ອຳນວຍການສູນໄອທີ ມະຫາວິທະຍາໄລແຫ່ງຊາດ;
- ວັນທີ 13 ກຸມພາ 2019 ເວລາ 13:30 ໂມງ ທີ່ ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ພາຍໃຕ້ການເປັນປະທານຂອງ ທ່ານ ຮສ ວຽງວິໄລ ທ່ຽງຈັນໄຊ ຄະນະບໍດີ ຄະນະນິຕິສາດ-ລັດຖະສາດ.

ຕາງໜ້າຈາກກົມໂຄສະນາເຜີຍແຜ່ກົດໝາຍ ນຳໂດຍ ທ່ານ ນາງ ຄອນສະຫວັນ ສາວະລີ ຮອງຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ກະຊວງຍຸຕິທຳ ພ້ອມທັງເປັນປະທານຮ່ວມທັງສາມຄັ້ງ, ຄະນະທີມງານຈາກກົມໂຄສະນາເຜີຍແຜ່ກົດໝາຍ ກະຊວງຍຸຕິທຳ, ໂຄງການ USAID LUNA II, ອາຈານ ແລະ ນັກສຶກສາ ຂອງທັງສາມສະຖາບັນ ກໍໄດ້ເຂົ້າຮ່ວມຮັບຟັງ, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 338 ທ່ານ, ຍິງ 146 ທ່ານ ແລະ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກໂຄງການ USAID LUNA II.

## II. ສະພາບການຈັດຕັ້ງປະຕິບັດ

- ການລົງໂຄສະນາເຜີຍແຜ່ແອັບກົດໝາຍໃນຄັ້ງນີ້ ຄະນະປະທານຂອງ ສາມ ສະຖາບັນ ໄດ້ມີຄຳເຫັນ ຄື: ໂດຍປະຕິບັດຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1753/ຫສນຍ.ກໝ, ລົງວັນທີ

10 ພະຈິກ 2016 ໄດ້ເຫັນດີ ໃຫ້ກະຊວງຍຸຕິທຳເປີດນຳໃຊ້ແອັບກົດໝາຍ ແລະ ແອັບຄຳສັບກົດໝາຍ, ສະນັ້ນ, ກະຊວງຍຸຕິທຳຈຶ່ງໄດ້ສ້າງແອັບກົດໝາຍເທິງໂທລະສັບມືຖືຂຶ້ນ ແລະ ເປີດນຳໃຊ້ຢ່າງເປັນທາງການໃນວັນທີ 5 ທັນວາ 2016 ຜ່ານມານີ້; ຄຽງຄູ່ກັບການພັດທະນາສື່ເອເລັກໂຕຣນິກໃຫ້ນັບມື້ນັບອຸດົມສົມບູນນັ້ນ, ກະຊວງຍຸຕິທຳ ເຫັນວ່າ: ການພັດທະນາແອັບກົດໝາຍເທິງໂທລະສັບມືຖື ກໍມີບົດບາດຄວາມສຳຄັນຕໍ່ກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຄວາມຮຽກຮ້ອງຕ້ອງການຂອງສັງຄົມໃນປັດຈຸບັນ, ບັນດາທ່ານໄດ້ກ່າວຕື່ມອີກວ່າ ກະຊວງຍຸຕິທຳໄດ້ສືບຕໍ່ສ້າງ ແລະ ພັດທະນາແອັບພລິເຄຊັນກົດໝາຍລາວມາເປັນ (version 3) ໃຫ້ເປັນອີກຊ່ອງທາງໜຶ່ງຂອງຮູບແບບການໂຄສະນາເຜີຍແຜ່ກົດໝາຍທີ່ມີຄວາມທັນສະໄໝໃນການຄົ້ນຫາກົດໝາຍເທິງມືຖື ເຮັດໃຫ້ປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງຂໍ້ມູນຂ່າວສານທາງດ້ານກົດໝາຍ, ມີການແຈ້ງເຕືອນ ເມື່ອມີກົດໝາຍໃໝ່ ຫຼື ກົດໝາຍປັບປຸງ, ນິຕິກຳລຸ່ມກົດໝາຍ ແລະ ຮ່າງນິຕິກຳທີ່ສາມາດປະກອບຄຳເຫັນ ໂດຍຜ່ານແອັບກົດໝາຍລາວ ໄດ້ຢ່າງວ່ອງໄວ ແລະ ງ່າຍຂຶ້ນກວ່າເກົ່າ;

ທ່ານໄດ້ເນັ້ນຕື່ມອີກວ່າ ການພັດທະນາ ແລະ ປັບປຸງ App Lao Law (version 3) ນີ້ ຊຶ່ງອີງໃສ່ຈາກ version 1 ແລະ version 2 ແມ່ນຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງສັງຄົມ ເນື່ອງຈາກວ່າໃນ version ເກົ່າ ແມ່ນຈະສາມາດຊອກຫາໄດ້ແຕ່ສະເພາະກົດໝາຍເທົ່ານັ້ນ. ສຳລັບແອັບກົດໝາຍ (version 3) ນີ້ແມ່ນໄດ້ເພີ່ມເຕີມບາງເມນູໃໝ່ ຊຶ່ງອັນພົ້ນເດັ່ນແມ່ນ ເມນູນິຕິກຳ ຊຶ່ງລວມມີ: ນິຕິກຳມີຜົນສັກສິດ ແລະ ນິຕິກຳປະກອບຄຳຄິດຄຳເຫັນ, ຄວາມພິເສດຂອງນິຕິກຳມີຜົນສັກສິດຖ້າຄຶກເຂົ້າໄປແມ່ນສາມາດເຫັນ ແລະ ຊອກໄດ້ງ່າຍດາຍເຊັ່ນ: ລັດຖະທຳມະນູນ, ກົດໝາຍ, ດຳລັດ, ຄຳສັ່ງ, ຂໍ້ຕົກລົງ ແລະ ຄຳແນະນຳ ຊຶ່ງໄດ້ເພີ່ມເຕີມເຂົ້າໃໝ່ນີ້ ແລະ ໃນຊ່ອງຂອງນິຕິກຳປະກອບຄຳຄິດຄຳເຫັນໃສ່ບັນດາຮ່າງນິຕິກຳນັ້ນ ກໍເຊັ່ນດຽວກັນ. ນອກຈາກນັ້ນຍັງສາມາດຊອກຫານິຕິກຳໄດ້ ໃນປະຫວັດການອ່ານ ແລະ ເມນູທີ່ບັນທຶກໄວ້ ໃນກໍລະນີທີ່ບໍ່ສາມາດ ເຊື່ອມຕໍ່ອິນເຕີເນັດ ຫຼື WiFi ໄດ້ອີກ;

ດັ່ງນັ້ນ, ການນຳໃຊ້ແອັບດັ່ງກ່າວ ໄດ້ສ້າງຜົນປະໂຫຍດຢ່າງຫຼວງຫຼາຍໃຫ້ແກ່ ຄູ, ອາຈານ, ນັກຮຽນ, ນັກສຶກສາ, ນັກແປພາສາ ແລະ ພະນັກງານ-ລັດຖະກອນ ໃນອົງການລັດ ແລະ ເອກະຊົນ ໃນການເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານທາງດ້ານກົດໝາຍ

- ຈາກນັ້ນ ທ່ານ ນາງ ຄອນສະຫວັນ ສາວະລີ ຮອງຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ກະຊວງຍຸຕິທຳ ໄດ້ມີຄຳເຫັນຕໍ່ການລົງໂຄສະນາເຜີຍແຜ່ແອັບກົດໝາຍ ຊຶ່ງທ່ານໄດ້ກ່າວວ່າ: ຈຸດປະສົງການລົງໂຄສະນາເຜີຍແຜ່ແອັບກົດໝາຍລາວ (version 3) ແມ່ນໄດ້ສ້າງຜົນປະໂຫຍດຢ່າງຫຼວງຫຼາຍໃຫ້ແກ່ນັກຮຽນ, ນັກສຶກສາ, ນັກແປພາສາ ແລະ ພະນັກງານ-ລັດຖະກອນ ໃນອົງການລັດ ແລະ ເອກະຊົນ ໄດ້ຮູ້ເຖິງກົດໝາຍ ແລະ ຄຳສັບກົດໝາຍຢ່າງຖືກຕ້ອງ, ສາມາດເວົ້າໄດ້ ວ່າພົນລະເມືອງລາວຈະອາໄສຢູ່ບ່ອນໃດຂອງປະເທດ ກໍຄືທົ່ວໂລກ ກໍສາມາດອ່ານ, ສາມາດຮຽນຮູ້ກົດໝາຍ ແລະ ປະກອບຄຳເຫັນໃສ່ຮ່າງນິຕິກຳຕ່າງໆໄດ້ ໂດຍຜ່ານໂທລະສັບມືຖືຂອງທ່ານ. ນອກນັ້ນແອັບກົດໝາຍລາວ (version 3) ຍັງເປັນແຫຼ່ງເກັບໂຮມຂໍ້ມູນທາງດ້ານກົດໝາຍ, ສາມາດຕອບສະໜອງຂໍ້ມູນທາງດ້ານກົດໝາຍໃຫ້ແກ່ສັງຄົມ ໂດຍຜ່ານໂທລະສັບມືຖື, ເຮັດໃຫ້ຜູ້ຊົມໃຊ້ສາມາດຮູ້ເຖິງການ ເຄື່ອນໄຫວ ແລະ ການແຈ້ງເຕືອນ ເມື່ອມີກົດໝາຍສ້າງໃໝ່ ຫຼື ກົດໝາຍປັບປຸງໃໝ່ ໄດ້ທຸກບ່ອນ, ທຸກເວລາ ເຮັດໃຫ້ປະຊາຊົນບັນດາເຜົ່າມີຄວາມໝັ້ນໃຈຕໍ່ຂໍ້ມູນທີ່ໄດ້ຮັບຊາບຢ່າງເປັນທາງການ.

## <u>ການນຳສະເໜີເນື້ອໃນ:</u>

- ຄະນະພະແນກຈົດໝາຍເຫດທາງລັດຖະການ ແລະ ເວັບໄຊ ກໍໄດ້ຂຶ້ນບັນຍາຍ, ແນະນຳ ກ່ຽວກັບວຽກງານງານຈົດໝາຍເຫດທາງລັດຖະການ, ລະບົບນິຕິກຳ ແລະ ນິຕິກຳທີ່ຈະເອົາລົງໃນຈົດໝາຍເຫດທາງລັດຖະການ.ຈາກ

ນັ້ນ, ກໍໄດ້ແນະນຳການເຂົ້າເຖິງເວັບໄຊຈົດໝາຍເຫດທາງລັດຖະການ, ເມນູຕ່າງໆ ແລະ ວິທີດາວໂຫຼດ ບັນດານິຕິກຳທີ່ຢູ່ໃນເວັບໄຊ;

- ທ່ານ ວິກກີ ບຸບຜາລີວັນ ກໍໄດ້ສະເໜີການເຂົ້ານຳໃຊ້ແອັບກົດໝາຍລາວ (version 3), ວິທີຕິດຕັ້ງແອັບຂອງລະບົບມືຖືແຕ່ລະລະບົບ, ການເຂົ້າໄປດາວໂຫຼດແອັບເພື່ອຕິດຕັ້ງ, ການເຂົ້າຫາເມນູຕ່າງໆ ໃນການຄົ້ນຫາບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອໃຫ້ຄູ-ອາຈານ ແລະ ນ້ອງນັກຮຽນ-ນັກສຶກສາ ທັງ 3 ສະຖາບັນໃຫ້ມີຄວາມຮັບຮູ້, ເຂົ້າໃຈ ແລະ ສາມາດເອົາໄປໝູນໃຊ້ເຂົ້າໃນການສິດສອນຂອງຄູອາຈານ, ການສຶກສາຮ່ຳຮຽນ ຂອງນັກສຶກສາໃຫ້ຫຼາຍຂຶ້ນກວ່າເກົ່າ;

ຫຼັງຈາກນັ້ນ, ທາງຄະນະທີມງານຈາກກະຊວງຍຸຕິທຳ ແລະ ທີມງານຈາກໂຄງການ USAID LUNA II ໄດ້ນຳພາບັນດາ ຄູ-ອາຈານ ແລະ ນ້ອງນັກຮຽນ-ນັກສຶກສາ ທັງ 3 ສະຖາບັນ ເຮັດກິດຈະກຳຮ່ວມກັນໃນການຖາມ-ຕອບ ແລະ ກິດຈະກຳອື່ນທີ່ກ່ຽວພັນກັບເນື້ອໃນຂອງການລົງໂຄສະນາໃນຄັ້ງນີ້ ເພື່ອຮັບເອົາເຄື່ອງລາງວັນ, ຊຶ່ງເຄື່ອງລາງວັນທີ່ເອົາມາແຈກ ປະກອບມີ ຄັນຮົ່ມ, ເສື້ອ, USB, ປຶ້ມຂຽນ, ຈອກກິນນ້ຳຊາ, ບິກຂຽນ. ສຳລັບປຶ້ມສັງລວມກົດໝາຍສ້າງໃໝ່ ແລະ ປັບປຸງ ປີ 2013 ແລະ ປີ 2018 ແມ່ນໃຫ້ສະຖາບັນການສຶກສາລະ 2 ຊຸດ ເພື່ອນຳໃຊ້ຢູ່ຫໍສະໝຸດຂອງຕົນ ພ້ອມທັງແຈກຢາຍໃຫ້ຜູ້ທີ່ມີຄວາມສາມາດໃນການຕອບຄຳຖາມໄດ້ ຈຳນວນ 8 ຊຸດ.

## III. ດ້ານດີ, ດ້ານອ່ອນ ແລະ ຂໍ້ສະເໜີ

### ດ້ານດີ

1. ຄະນະພັກ, ຄະນະນຳກະຊວງໄດ້ເອົາໃຈໃສ່, ຊີ້ນຳ ແລະ ໃຫ້ຄວາມສຳຄັນ ໃນການລົງໂຄສະນາເຜີຍແຜ່ແອັບກົດໝາຍລາວ (version 3) ແລະ ວຽກງານຈົດໝາຍເຫດທາງລັດຖະການໃນຄັ້ງນີ້;
2. ໄດ້ຮັບການຕ້ອນຮັບ ແລະ ໃຫ້ຄວາມຮ່ວມມືເປັນຢ່າງດີໃນການລົງໂຄສະນາແອັບກົດໝາຍ (version 3) ຈາກຄະນະນຳຂອງ ສາມ ສະຖາບັນ;
3. ໄດ້ຮັບການສະໜັບສະໜູນຈາກໂຄງການ USAID LUNA II ທາງດ້ານງົບປະມານ;
4. ບັນດາຄູ-ອາຈານສາມາດນຳໃຊ້ຂໍ້ມູນຕ່າງໆເຂົ້າໃນຫຼັກສູດການຮຽນ ແລະ ການສອນ;
5. ນັກສຶກສາກໍເອົາຂໍ້ມູນຕ່າງໆເຂົ້າໃນການສຶກສາຮ່ຳຮຽນຂອງຕົນ;
6. ເຮັດໃຫ້ພົນລະເມືອງລາວສາມາດເຂົ້າເຖິງຂໍ້ມູນຂ່າວສານ ໂດຍບໍ່ໄດ້ເສຍຄ່າ, ສະດວກ ແລະ ວ່ອງໄວ

### ດ້ານອ່ອນ

- ໃນການລົງໂຄສະນາເຜີຍແຜ່ແອັບກົດໝາຍລາວ (version 3) ຈຳນວນ ນ້ອງນັກຮຽນ-ນັກສຶກສາ ການເຂົ້າຮ່ວມຮັບຟັງ ບາງສະຖາບັນຍັງມີຈຳນວນໜ້ອຍ ແລະ ຄວາມສົນໃຈໃນການຟັງການບັນຍາຍຍັງເຮັດບໍ່ໄດ້ດີ ຊຶ່ງສະແດງອອກ ບໍ່ມີຄຳຖາມ ແລະ ແລກປ່ຽນບົດຮຽນ ກັບຜູ້ບັນຍາຍ;
- ການປະສານສົມທົບກັບບາງສະຖາບັນການສຶກສາ ແມ່ນພົບກັບຄວາມຫຍຸ້ງຍາກ.

**ຜົນໄດ້ຮັບ**

- ເຫັນໄດ້ວ່າ 3 ສະຖາບັນ ກໍຄື ຄູ-ອາຈານ, ນັກສຶກສາ ທີ່ໄດ້ເຂົ້າຮ່ວມ ແມ່ນມີແອັບກົດໝາຍລາວ (version 3) ເທິງໂທລະສັບມືຖືເກືອບໝົດທຸກຄົນ;
- ແຕ່ລະຄົນທີ່ເຂົ້າຮ່ວມ ແມ່ນໄດ້ມີກິດຈະກຳຮ່ວມກັນ ແລະ ສາມາດ (ຖາມ-ຕອບ) ເອົາລາງວັນທີ່ທີມງານກະກຽມມາ ໄດ້ຕາມຄາດໝາຍ ແລະ ມີຜົນສຳເລັດທີ່ຈົບງາມ ສະແດງອອກ ທຸກໆຄົນສາມາດຈື່ຈຳບົດຮຽນທີ່ຜູ້ບັນຍາຍໄດ້ຖ່າຍທອດໃຫ້ ແລ້ວກັບມາຕອບເອົາຂອງລາງວັນແມ່ນຖືກສ່ວນຫຼາຍ;
- ຫຼັງຈາກທີ່ໄດ້ລົງໂຄສະນາເຜີຍແຜ່ແອັບກົດໝາຍລາວ (version 3) ໃນຄັ້ງນີ້ ຍອດຜູ້ດາວໂຫຼດແອັບ ທັງສອງລະບົບ ຄື ລະບົບປະຕິບັດການ IOS ແລະ Android ເພີ່ມຂຶ້ນຫຼາຍເທົ່າທີ່ຄວນ;
- ພາຍຫຼັງການລົງໂຄສະນາໃນສາມຄັ້ງນີ້ ສະຖິຕິການດາວໂຫຼດແອັບນັບຕັ້ງແຕ່ ວັນທີ 1 ກຸມພາ 2019 ຫາ 22 ກຸມພາ 2019 ຍອດຜູ້ດາວໂຫຼດແອັບ ທັງສອງລະບົບ ຄື ລະບົບປະຕິບັດການ IOS ແລະ Android ເພີ່ມຂຶ້ນ ຈາກ 24,534 ຄັ້ງ ເປັນ 25,124 ຄັ້ງ, ເພີ້ມຂຶ້ນ 590 ຄັ້ງ;
- ສະຖິຕິຜູ້ຄົນເຂົ້າໃຊ້ແອັບກົດໝາຍລາວ ທັງສອງລະບົບ ຄື ລະບົບປະຕິບັດການ IOS ແລະ Android ແມ່ນ 69,031 ເທື່ອ.

## IV. ພາກສະເໜີ

- ຢາກໃຫ້ປັບປຸງການຄົ້ນຫາມາດຕາຂອງບັນດານິຕິກຳໄດ້ຢ່າງສະດວກ;
- ໃນເມື່ອເຮົາຊອກຫາຄຳສັບທີ່ມັນໃກ້ຄຽງກັນ ກໍຢາກໃຫ້ສະແດງອອກມາເລີຍ ໂດຍບໍ່ຈຳເປັນພິມໝົດຄຳສັບ;
- ຢາກໃຫ້ໂຄງການ USAID LUNA II ສະໜັບສະໜູນທາງດ້ານງົບປະມານ ເພື່ອລົງໂຄສະນາຢູ່ຕາມສະຖານບັນການສຶກສາຕື່ມອີກ.

ໃນຕອນທ້າຍ ທ່ານ ນາງ ຄອນສະຫວັນ ສາວະລີ ຮອງຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ກະຊວງຍຸຕິທຳ ກໍໄດ້ສະແດງຄວາມຂອບໃຈ ກັບຄະນະນຳຂອງ 3 ສະຖາບັນທີ່ໄດ້ສະຫຼະເວລາອັນມີຄ່າເຂົ້າຮ່ວມຈົນສຸດກົກສຸດປາຍ ເຫັນໄດ້ເຖິງຄວາມໝາຍຄວາມສຳຄັນຂອງວຽກງານດັ່ງກ່າວ ແລະ ໃຫ້ການຮ່ວມມືກັບທາງຄະນະພວກເຮົາເປັນຢ່າງດີ. ທ່ານຍັງໄດ້ຮຽກຮ້ອງໃຫ້ບັນດາທ່ານຜູ້ເຂົ້າຮ່ວມໃນຄັ້ງນີ້ ຂໍໃຫ້ມີແອັບກົດໝາຍໝົດທຸກທ່ານ ເພື່ອໃຫ້ນຳໃຊ້ເຂົ້າໃນວຽກການຂອງຕົນ ແລະ ສຶກສາຮໍ່າຮຽນ.

[illegible] **ຫົວໜ້າກົມ** | **ຜູ້ລາຍງານ**

ກະຊວງຍຸຕິທຳ
ກົມໂຄສະນາເຜີຍແຜ່ກົດໝາຍ

ນ.ຄອນສະຫວັນ ສາວະລີ